# ກົບປູ່ໜອງຍາວ

ໂຄງການສິ່ງແວດລ້ອມສຶກສາໃນຂັ້ນປະຖົມ

## ໂຄງການສິ່ງແວດລ້ອມສຶກສາໃນຂັ້ນປະຖົມ



(ສະບັບທົດລອງ)







ຂໍ້ມູນຈາກ: ຊາວບ້ານໜອງຍາວ

ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ

2007

**ຂໍ້ມູນຈາກ**: ບ້ານໜອງຍາວ, ເມືອງນາຊາຍທອງ,
ນະຄອນຫຼວງວຽງຈັນ.

**ໃຫ້ຂໍ້ມູນໂດຍ**: ພໍ່ຕູ້ ສາ, ທ່ານວິໄນ, ພໍ່ຕູ້ ເຟື້ອງ
ທ່ານ ສຸວັນນະທອນ, ພໍ່ຕູ້ ກຸ່ຍ,
ທ່ານ ບຸນສີ, ທ່ານ ສະໄຫວ, ທ່ານ ປະເສີດ.

**ຮຽບຮຽງໂດຍ**: ທ. ວັດທະນາ ພັນຄໍາ

**ພິມ ແລະ ຈັດໜ້າໂດຍ**: ທ. ວັດທະນາ ພັນຄໍາ

**ແຕ້ມຮູບປະກອບໂດຍ**: ທ. ພຸດທະສິດ ຈັນທະວົງສາ

**ເຈົ້າຂອງໂຄງການ**: ພະແນກສຶກສານະຄອນຫຼວງ
ວຽງຈັນ, ຫ້ອງການສຶກສາເມືອງນາຊາຍທອງ,
ສູນອົບຮົມຮ່ວມພັດທະນາ.

**ສະໜັບສະໜູນໂດຍ**: ກອງທຶນຮັກສາສິ່ງແວດລ້ອມ (WWF)
ປະຈໍາ ສປປ ລາວ.

PADETC

WWF

# ຄຳນຳ

ປຶ້ມເຫຼັ້ມນີ້ໄດ້ຂັດຈ້ອນເອົາຂໍ້ມູນມາຈາກປຶ້ມຂໍ້ມູນສິ່ງແວດລ້ອມສຶກສາບ້ານໜອງຍາວທີ່ເປັນຜົນງານການຂຽນ ແລະໃຫ້ຂໍ້ມູນຂອງຄູອາຈານແລະຊາວບ້ານໜອງຍາວ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ. ແລ້ວມາສັງລວມເປັນປຶ້ມຄວາມຮູ້ສິ່ງແວດລ້ອມສຶກສາທ້ອງຖິ່ນເຫຼັ້ມນີ້ ທີ່ມີເນື້ອໃນຄວາມຮູ້ກ່ຽວກັບໜອງຍາວ ແລະສັດທີ່ມີຢູ່ໜອງຍາວ ເພື່ອເປັນບ່ອນອີງໃຫ້ແກ່ຄູທີ່ສົນໃຈນຳໄປໝູນໃຊ້ປູກຈິດສຳນຶກໃຫ້ແກ່ເດັກໄດ້ຮັບຮູ້ຄວາມສຳຄັນ, ຄຸນປະໂຫຍດ ແລະຄຸນຄ່າຂອງສິ່ງແວດລ້ອມໃນທ້ອງຖິ່ນ.

ດັ່ງນັ້ນທາງທີມງານໂຄງການສິ່ງແວດລ້ອມສຶກສາມີຄວາມຍິນດີເປັນຢ່າງຍິ່ງຕໍ່ຄຳຄິດເຫັນ, ຕຳນິ, ຕິຊົມຈາກຜູ້ອ່ານ ແລະຜູ້ຊົມໃຊ້ທັງໝົດ, ແລະພ້ອມທີ່ຈະນຳໄປປັບປຸງ, ແກ້ໄຂເຮັດໃຫ້ປຶ້ມສິ່ງແວດລ້ອມສຶກສາເຫຼັ້ມນີ້ຄົບຖ້ວນ ແລະສົມບູນຂຶ້ນກວ່າເກົ່າ.

## ຄວາມເປັນມາຂອງໜອງຍາວ

ໂດຍອີງຕາມການບອກເລົ່າຂອງຜູ້ເຖົ້າຜູ້ແກ່ທີ່ອາໄສຢູ່ບ້ານນາຄູນນ້ອຍໄດ້ເວົ້າວ່າ: ໜອງແຫ່ງນີ້ເປັນໜອງທີ່ມີມາແຕ່ດຶກດຳບັນເກີດຂຶ້ນໂດຍທຳມະຊາດ ແລະ ຍັງບໍ່ທັນໄດ້ຖືກຜົນກະທົບຈາກພາຍນອກ, ພາຍໃນໜອງຍາວປະກອບມີ 5 ໜອງນ້ອຍທີ່ຮ່ວມເຂົ້າກັນຄື:

1. ໜອງແກວ
2. ໜອງເມັກ
3. ໜອງໃຫຍ່
4. ໜອງປອນ
5. ໜອງນ້ອຍ



ເມື່ອໄດ້ຍິນດັ່ງນັ້ນ ລາວກໍຂໍໃຫ້ນາງຟ້າໃຈດີເສກໃຫ້ລາວກັບຄືນມາເປັນກົບອີກ ແລະ ຈະເປັນກົບຕະຫຼອດໄປ.





ໜອງທັງຫ້ານີ້ໄດ້ລຽນຕໍ່ຕິດກັນເປັນສາຍຍາວ ແລະມີຕົ້ນໄມ້ນາໆຊະນິດເກີດຂຶ້ນຢູ່ລຽບຕາມແຄມໜອງ, ດັ່ງນັ້ນເພິ່ນຈິ່ງໄດ້ໃສ່ຊື່ວ່າ: **ໜອງຍາວ** ທີ່ມີຄວາມອຸດົມສົມບູນທີ່ສຸດໃນເມື່ອກ່ອນ. ເປັນໜອງທຳມະຊາດທີ່ບໍ່ທັນໄດ້ມີການດັດແປງ, ຈຸດພິເສດເປັນໜອງທີ່ໃຫຍ່ ແລະ ຍາວກວ່າໝູ່ຢູ່ໃນເຂດເມືອງນາຊາຍທອງ, ມີລັກສະນະກົມຍາວ ແລະ ຕໍ່າຢູ່ທາງກາງ, ມີຂີ້ສະໜົມຢັງຢາຍກັນຢູ່ທົ່ວໜອງ ເຊິ່ງເປັນບ່ອນອາໄສ, ຂະຫຍາຍພັນຂອງສັດ ແລະ ພືດ. ດັ່ງນັ້ນຈິ່ງເຮັດໃຫ້ປາ, ສັດນໍ້າ ແລະ ພືດບາງຊະນິດບໍ່ຖືກດັບສູນເຊັ່ນ:

- **ສັດນໍ້າ:** ກຸ້ງ, ຫອຍ, ປູນາ, ປາຄໍ່, ປາເຂັງ, ປາກະເດີດ, ປາຊິວ, ປາຂາວ, ປາຫຼິດ, ອ່ຽນ, ປາສະທິງ, ປາອີ່ເມ, ປາເຊືອມ, ປາຄັບຂອງ, ປາໝັດ, ປາກັດ, ແມງດາ, ອີ່ໝ້ຽວ, ແມງຕັບເຕົ່າ,ແມງຊອນ...
- **ສັດເຄິ່ງບົກເຄິ່ງນໍ້າ:** ກົບ, ຂຽດອີ່ໂມ້, ຂຽດເຫຼືອງ, ຂຽດຈິກໃຫຍ່, ຂຽດຈະນາ, ຂຽດ ຂາຄຳ, ຂຽດຊາວ, ອື່ງ, ຄັນຄາກ, ເຕົ່າຈັບ...
- **ສັດເລືອຄານ**: ງູເຫົ່າ, ງູດິນ, ງູປາ, ງູສິງ, ງູທຳທານ, ງູຂຽວ, ງູຫອມ...

- **ສັດປີກ:** ນົກເຈົ່າ, ນົກຍາງ, ນົກເປັດນ້ຳ, ນົກຂີ້ກະ ເດືອນ, ນົກໄກ່ນາ, ນົກເຈົ່າ ຟານ, ນົກແຕນຊິວ, ນົກແອນ...
- **ສັດລ້ຽງ:** ງົວ, ຄວາຍ, ເປັດ...
- ພືດທີ່ເກີດຂຶ້ນໃນບໍລິເວນໜອງຍາວໄດ້ແກ່ຈອກ, ແໜ, ບົວຫຼວງ, ຫຍ້າບົ່ວ, ຫຍ້າເຂົ້າ ນົກ, ຜັກປອດ, ຜັກໄສ້ໄກ່, ຜັກກູດ, ຫຍ້າປ້ອງ, ຫຍ້າເຂົ້ານົກ...

**ດັ່ງນັ້ນຈິ່ງເຮັດໃຫ້ໜອງຍາວມີຄວາມສຳຄັນຕໍ່ຊຸມຊົນຫຼາຍຄື:**

- ເປັນແຫຼ່ງນ້ຳທີ່ມີໄວ້ສຳລັບການທຳມາຫາລ້ຽງຊີບຕາມທຳມະຊາດ
- ສາມາດສ້າງລາຍຮັບໂດຍການຈັບສັດນ້ຳ ແລະ ພືດຊະນິດຕ່າງທີ່ມີຢູ່ພາຍໃນໜອງໄປຈຳໜ່າຍ ເຊັ່ນ: ປາຄໍ່, ປາດຸກ, ປາເຂັງ ແລະ ດອກບົວເປັນຕົ້ນ...
- ໃຊ້ເຂົ້າໃນການປູກຝັງ - ລ້ຽງສັດເຊັ່ນ: ລະບາຍນ້ຳເຂົ້ານາ, ໃຊ້ເຂົ້າໃນສວນຄົວ, ເປັນບ່ອນຕອບສະໜອງນ້ຳດື່ມໃຫ້ແກ່ງົວ, ຄວາຍ ແລະ ສັດລ້ຽງອື່ນໆ...
- ເປັນບ່ອນສຶກສາຄວາມຮູ້ກ່ຽວກັບທຳມະຊາດ.





ແລ້ວລາວກໍດີໃຈແລ່ນເຂົ້າໄປໃນປ່າ, ແຕ່ລາວເປັນເສືອໄດ້ພຽງ 4 ວັນທໍ່ນັ້ນ ລາວກໍຢ້ານຕົວສັ່ນແລ່ນກັບໄປຫານາງຟ້າໃຈດີ ເພາະຖືກຄົນໄລ່ລ່າ.





ແຕ່ລາວເປັນແມວໄດ້ພຽງ 2 ມື້ທໍ່ນັ້ນ ລາວກໍ່ຟ້າວແລ່ນກັບໄປຫານາງຟ້າເສກໃຫ້ລາວກາຍເປັນໝາ ເພາະລາວຖືກໝາໄລ່ກັດທຸກມື້.



ແລ້ວລາວກໍ່ໄດ້ກາຍເປັນໝາສົມໃຈ



ແຕ່ເປັນໝາໄດ້ພຽງ 3 ມື້ທໍ່ນັ້ນ ລາວກໍ່ຕ້ອງກັບໄປຫານາງຟ້າອີກ ເພາະລາວໄດ້ໄປພົບກັບເສືອ ແລະເສືອຈະຈັບລາວກິນ, ມາເຖິງຕອນນີ້ລາວຂໍເປັນເສືອ, ນາງຟ້າໃຈດີກໍເສກໃຫ້ລາວກາຍເປັນເສືອໂດຍທັນທີທັນໃດ.



ສັດ ແລະ ພືດຫຼາຍຊະນິດທີ່ກ່າວມາຂ້າງເທິງຍັງມີລັກສະນະທີ່ແຕກຕ່າງກັນທາງດ້ານຮ່າງກາຍ, ການດຳລົງຊີວິດ, ການກິນອາຫານ, ການເຄື່ອນໄຫວ ແລະ ມີຄຸນປະໂຫຍດແຕກຕ່າງກັນ. ແຕ່ປື້ມເຫຼັ້ມນີ້ຈະລົງເລິກຮຽນຮູ້ກ່ຽວກັບສັດເຄິ່ງບົກເຄິ່ງນ້ຳທີ່ຫຼາຍຄົນຮູ້ຈັກກັນດີ ນັ້ນກໍຄືກົບນັ້ນເອງ:









**ລັກສະນະຂອງກົບ**

ກົບ ເປັນສັດເຄິ່ງບົກເຄິ່ງນ້ຳ (ໝາຍຄວາມວ່າ ກົບສາມາດດຳລົງຊີວິດຢູ່ເທິງບົກ ແລະ ໃນນ້ຳໄດ້) ຄືກັນກັບຂຽດ. ກົບມີ 4 ຂາ ຄືຂາໜ້າ ແລະ ຂາຫຼັງ ໄວ້ສຳລັບເຕັ້ນ ແລະ ລອຍນ້ຳ, ມີໜັງບໍ່ລຽບປົກຫຸ້ມທົ່ວຮ່າງກາຍ, ຫາຍໃຈດ້ວຍປອດ ແລະ ຜັນຜືນ.

**ທີ່ຢູ່ອາໄສຂອງກົບ**

ດັ່ງນັ້ນມັນຈຶ່ງມັກອາໄສຢູ່ບ່ອນທີ່ມີນ້ຳ ແລະ ບ່ອນທີ່ຊຸ່ມເຢັນດີ. ແຕ່ດຽວນີ້ປ່າໄມ້ຢູ່ບ້ານໜອງຍາວຂອງພວກເຮົາແມ່ນຍັງເຫຼືອໜ້ອຍ, ນ້ຳທີ່ມີຢູ່ໃນໜອງກໍຫຼຸດລົງ ແລະ ບໍ່ອຸດົມສົມບູນຄືແຕ່ກ່ອນ ເຮັດໃຫ້ກົບບາງຈຳນວນໜີໄປຢູ່ບ່ອນໃໝ່ ຫຼືພວກທີ່ບໍ່ໄດ້ໜີໄປໃສກໍຖືກຄົນຈັບພວກເຂົາໄປກິນເກືອບໝົດ.

**ການຂະຫຍາຍພັນ**

ເມື່ອຮອດລະດູຝົນ ເລີ່ມແຕ່ເດືອນ 6 ເປັນຕົ້ນໄປ ແມ່ກົບຈະໄຂ່ລົງໃນນ້ຳ ແລະ ຂີ້ຕົມ ໄຂ່ຈະຈັບກັນເປັນແຜ່ນຟູຢູ່ເທິງໜ້ານ້ຳ, ໄຂ່ຈະເປັນສີໃສໆທີ່ເຕັມໄປດ້ວຍ ສານອາຫານ ແລະ ມີຈຸດສີດັບໝູຢູ່ເຄິ່ງກາງ ນັ້ນແມ່ນບັນດາໂຕຂອງກົບນ້ອຍ.

**ອາຫານຂອງກົບນ້ອຍຕອນຢູ່ໃນໄຂ່**

ໃນເວລານີ້ພວກເຂົາຈະກິນອາຫານທີ່ແມ່ຂອງພວກເຂົາໃຫ້ມາໃນໜ່ວຍໄຂ່ ເຮັດໃຫ້ຮ່າງກາຍຂອງພວກເຂົາເຕີບໃຫຍ່ ແລະ ແຂງແຮງ.



ຂໍ້. 2



**ນິທານ:** ກົບຢ້ານຖືກກິນ”

ດົນນານມາແລ້ວ ມີກົບນ້ອຍໂຕໜຶ່ງອາໃສຢູ່ໃນປ່າໃກ້ໜອງນ້ຳ, ຢູ່ມາມື້ໜຶ່ງລາວເກີດມີຄວາມຄິດບໍ່ຢາກເປັນກົບອີກຕໍ່ໄປ ເພາະເບື່ອທີ່ຈະເຕັ້ນໜີງູທີ່ຄອຍຖ້າທີ່ຈະຈັບລາວກິນ, ລາວຈຶ່ງໄປຂໍຮ້ອງໃຫ້ນາງຟ້າໃຈດີ ເສກໃຫ້ລາວກາຍເປັນແມວ.



**ບົດເລກທີ:** *2*

ສຳລັບນັກຮຽນປ. 4 + ປ. 5

ໜອງຍາວມີຄວາມກວ້າງ 300ແມັດ ແລະ ລວງຍາວ 1,100ແມັດ ຖາມວ່າໜອງຍາວມີເນື້ອທີ່ເທົ່າໃດ?



**ເກມ**:ໃຜກິນໃຜກ່ອນ"

ເພື່ອໃຫ້ນັກຮຽນຝຶກຄິດເປັນລະບົບ

ຮູບຢູ່ລຸ່ມນີ້ຈັດລຽງບໍ່ຖືກຕ້ອງຕາມຕ່ອງໂສ້ອາຫານ ລອງຈັດໃຫ້ຖືກຕ້ອງໃຫ້ແດ່

(ຂຽນໃສ່ຊ່ອງຫວ່າງ)

ຂໍ້. 1





**ອາຫານຂອງກົບ**

ຕອນທີ່ພວກເຈົ້າຍັງນ້ອຍ ຫຼືເອີ້ນວ່າ ລູກຮວກອາຫານຫານທີ່ແມ່ຂອງພວກເຂົາໃຫ້ກິນກໍຈະເລີ່ມໝົດໄປ, ພວກເຂົາຕ້ອງເລີ່ມຊອກຫາອາຫານດ້ວຍຕົວເອງ ພວກເຂົາຈະກິນຈຳພວກໄຮນ້ຳ, ສັດນ້ອຍໆທີ່ອາໄສຢູ່ໃນນ້ຳ ແລະ ກິນຈຳພວກໝອນ



ນ້ຳເປັນອາຫານ, ບາງຄັ້ງພວກເຂົາກໍກິນຊາກສັດທີ່ຕາຍ ແລະເນົ່າເປື່ອຍ.... ແຕ່ເມື່ອພວກເຂົາຕົບໂຕຂຶ້ນ ພວກເຂົາຈະມັກກິນຈຳພວກແມງໄມ້ຊະນິດຕ່າງໆ, ບົ້ງ, ຂີ້ກະເດືອນເປັນຕົ້ນ...

**ການຈະເລີນເຕີບໂຕຂອງກົບ**

ເມື່ອພວກເຂົາເຕີບໃຫຍ່ຂຶ້ນມາ ແລະ ມີຮ່າງກາຍທີ່ແຂງແຮງພວກເຂົາກໍ່ຈະອອກມາຈາກໄຂ່ ກາຍເປັນໂຕຮວກ

ຕອນນີ້ພວກເຂົາມີຫາງທີ່ຍາວໃວ້ສຳລັບລອຍນໍ້າ ແລະ ອາໄສ ຢູ່ໃນນໍ້າ ໂດຍຫາຍໃຈໄດ້ດ້ວຍຟັນຟືນ, ຢູ່ມາໄດ້ໄລຍະໜຶ່ງພວກ ເຂົາກໍເລີ່ມມີຂາຫຼັງປົ່ງອອກມາ. ແລ້ວຕໍ່ມາໄລຍະໜຶ່ງຂາໜ້າ ຈຶ່ງປົ່ງອອກມາຕາມຫຼັງ ເພື່ອສະດວກໃນການລອຍນໍ້າ, ເຕັ້ນ ແລະ ຈັບອາຫານງ່າຍຂຶ້ນ.

ເມື່ອຂາທັງ 4 ຂອງພວກເຂົາຂະຫຍາຍໂຕ ແລະ ແຂງແຮງ ຫາງ ຂອງພວກເຂົາກໍເລີ່ມຫົດສັ້ນເຂົ້າ ປອດຂອງພວກເຂົາກໍ່ຈະເລີ່ມ ຂະຫຍາຍໂຕ ແລະ ທຳງານ ເພື່ອກະກຽມທີ່ຈະຂຶ້ນໄປຫາກິນຢູ່ ເທິງບົກ, ເມື່ອບໍ່ມີຫາງພວກເຂົາກໍເລີ່ມເຕັ້ນອອກຫາກິນຢູ່ເທິງ ບົກ, ດັ່ງນັ້ນພວກເຂົາຈຶ່ງຄອງຄອຍໃຫ້ຫາງຂອງພວກເຂົາຫົດ ສັ້ນເອົາໝົດໄວໆ ເພື່ອຈະໄດ້ຂຶ້ນໄປຫາກິນຢູ່ເທິງບົກ ແລະ ກຽມພ້ອມທີ່ຈະແຜ່ພັນໃນປີຕໍ່ໄປ. ແຕ່ຢ່າງໃດກໍຕາມໃນໄລຍະ ພວກເຂົາຍັງນ້ອຍພວກເຂົາຕ້ອງລະວັງໂຕໄວ້ຢູ່ຕະຫຼອດເວລາ ເພາະມີສັດທີ່ຈອບຈະທຳຮ້າຍພວກເຂົາ ໂດຍສະເພາແມ່ນ ງູ, ປາ, ແລະຄົນເປັນຕົ້ນ...





## ເກມ: ຂ້ອຍແມ່ນໃຜ

ຈຸດປະສົງເພື່ອໃຫ້ນັກຮຽນຫັດຄິດ ແລະ ຕັ້ງຄຳຖາມ: ເບິ່ງຮູບ, ຄິດ ແລ້ວຕອບຄຳຖາມດັ່ງລຸ່ມນີ້

| | | a | r |
|---|---|---|---|
|  | ກົບເປັນສັດເລືອຄານຊະນິດໜຶ່ງ | o | o |
|  | ກົບເປັນສັດເຄິ່ງບົກເຄິ່ງນໍ້າຊະນິດໜຶ່ງ | o | o |
|  | ກົບເປັນສັດລ້ຽງລູກດ້ວຍນົມຊະນິດໜຶ່ງ | o | o |
|  | ກົບເປັນສັດກິນພືດຊະນິດໜຶ່ງ | o | o |
|  | ກົບເປັນແມງໄມ້ຊະນິດໜຶ່ງ | o | o |
|  | ກົບກິນສັດນ້ອຍເປັນອາຫານ | o | o |
|  | ກົບເປັນສັດມີ 2 ຂາ | o | o |
|  | ກົບເປັນສັດມີ 4 ຂາ | o | o |

ບົດເລກທີ: 1

ສຳລັບນັກຮຽນ ປ. 2 + ປ. 3

ມື້ວານນີ້ ລຸງເພັດໄດ້ໄປໃສ່ເບັດກົບ ເມື່ອໄດ້ກົບມາລາວໄດ້ແບ່ງໄປຂາຍ 7 ໂຕ, ແບ່ງໃຫ້ລູກສາວລາວ 5 ໂຕ, ແລະ ອີກ 4 ໂຕລາວຈຶ່ງໄວ້ປີ້ງກິນກັບຕຳໝາກຮຸ່ງ ຖາມວ່າລາວໃສ່ເບັດໄດ້ກົບທັງໝົດຈັກໂຕ?.





## ວົງຈອນຊີວິດຂອງກົບ



## ໄຂ່ກົບ



## ລູກກົບເບາະໃໝ່ (ຮວກນ້ອຍ)



## ລູກກົບມີໄດ້ອາຍຸ 1 ອາທິດ (ຮວກໃຫຍ່)



## ລູກກົບມີອາຍຸໄດ້ 6 ອາທິດ (ລູກຮວກໃຫຍ່ເຕັມທີ)



ຟັນພືມພາຍນອກຫາຍໄປ



## ເພງ: ກົບຕົວນ້ອຍ

ກົບຕົວນ້ອຍ ອອກມາຫຼິ້ນຝົນຕົກ
ນັ່ງຄຶກມຶກ ຍົກຂາຊ້າຍຂາຂວາ
ເປັນຕາຫົວ ເວລາມັນໂດດ

ອິບ ອິບ ອິບ ອິບ

ກົບຕົວນ້ອຍ ອອກມາຫຼີ້ຝົນຕົກ
ນັ່ງຄຶກມຶກ ແນມຊ້າຍແນມຂວາ
ເປັນຕາຫົວ ເວລາມັນໂດດ

ອິບ ອິບ ອິບ ອິບ



## – ຂັບທູ້ມ –

ປ່າລ່າ ເຫັນໜອງຍາວ ຊ່າງມາງາມແທ້ເດ
ຊ່າງມາດີໃຈເດ ສົມພານເພມາສົມເຈົ້າ
ອ້າຍນີ້ມາໄດ້ຍິນວ່າ ເຈົ້າມີມາແຕ່ເຄົ້າ
ທຸກຄ່ຳເຊົ້າ ຕົວເຈົ້າບໍ່ປ່ຽນແປງ
ເມື່ອຈະເຖິງຍາມແລງ ຝູງນົກກາມັນບິນຈອນ
ໂອວ່າເຈົ້າດອກແຄຂາວ ປົກປັກຮັກສາໜອງຍາວ
ໃຫ້ໝັ້ນຄົງ ຢູ່ຍືນຍົງໄວ້.
ເອີ - ເອີ - ເອີ ປະຊາ ປະຊາຮີບມາສ້ອມແປງ
ໃຫ້ມັນເປັນແວ່ນແຍງ ໃຫ້ພວກເຮົານີ້ສືບທອດໄວ້.

ແຕ່ງໂດຍ: ວິໃນ ຊຸນດາວົງ





ກົບ ໄດ້ອາຍຸ 8 ອາທິດ




ກົບໄດ້ອາຍຸ 12 ອາທິດ




ເມື່ອຫາງເລີ່ມຫົດເຂົ້າໝົດ ກົບຈະເຕັ້ນອອກຈາກນ້ຳ
ເພື່ອຂຶ້ນມາຫາກິນຢູ່ເທິງບົກ



**ຄຸນປະໂຫຍດຂອງກົບ:**

- ກົບໃຫ້ຄຸນປະໂຫຍດໃນການຮຽນຮູ້ທາງດ້ານສິ່ງແວດລ້ອມ ເຊັ່ນ: ເປັນຫຍັງກົບຈິ່ງສາມາດມີຊີວິດຢູ່ເທິງບົກ ແລະ ໃນນໍ້າໄດ້?, ເປັນຫຍັງກົບຈິ່ງມີຊີວິດຢູ່ໃນຮູ ຫຼື ເປົ້າໄດ້ນານຫຼາຍເດືອນ ໂດຍສະເພາະໃນຍາມລະດູແລ້ງ ໂດຍບໍ່ໄດ້ກິນນໍ້າ ແລະ ອາຫານ?...
- ກົບກິນຈຳພວກໄຮນໍ້າ, ໄຂ່ຍຸງ, ໜອນນໍ້າ, ແລະ ອື່ນໆ... ເຮັດໃຫ້ຍຸງແຜ່ພັນໄດ້ໜ້ອຍ
- ກົບຍັງຮ້ອງມ່ວນໃນລະດູຝົນຕົກ
- ກົບຍັງນຳມາປຸງແຕ່ງອາຫານແຊບ, ແລະເປັນອາຫານໄດ້ຫຼາຍປະເພດ





**ເພງ : ທຳມະຊາດໜອງຍາວ**

ໜອງຍາວແຫ່ງນີ້ ຊ່າງງາມດີສິດສວຍງາມຕາ
ໃນນໍ້າມີປາ ໃນນາມີເຂົ້າຂຽວອ່ອນ
ໃຜເຄີຍໄດ້ມາເຫັນ ບໍ່ເວັ້ນຄິດຢາກກັບຍ້ອນ
ໜອງຍາວເປັນບ່ອນ ປະຊາຫາລ້ຽງຊີບກາຍ

v ໃຜໄດ້ມາເຫັນ ຄົງເປັນບຸນຫຼາຍຍິ່ງ
ຊ່າງງາມທຸກສິ່ງ ບໍ່ມີວັນເສື່ອມຄາຍ
ປ່າໄມ້ງາມຕາ ທົ່ງນາເປັນສອງຝ່າຍ
ເໝືອນດັ່ງດວງໃຈ ປະຊາໄດ້ສ້າງໄມຕຼີ

v ໜອງຍາວ ມີມາແຕ່ຄັ້ງຄາວກ່ອນ
ສຸດແສນອອນຊອນ ປະຊາເບິ່ງມາຫຼາຍປີ
ມີເຂົ້າໃນນາ ມັດສາລອຍໃນນາທີ
ແຫ່ງໃດຈະມີ ຫຼຸບທັນບ້ານໃໝ່ໜອງຍາວ

ແຕ່ງໂດຍ: ເກສະໜາ ພາລິມ

